# ແຜນນິຍາມຄຳສັບ

<u>ນິຍາມຄຳສັບ</u>

1. <u>ການນຳໃຊ້</u>

1.1 ເອກະສານນີ້ປະກອບເປັນເອກະສານນິຍາມຄຳສັບທີ່ໄດ້ອ້າງອີງເຖິງໃນເງື່ອນໄຂການທະນາຄານລວມຂອງ ANZ .

1.2 ແຜນນິຍາມຄຳສັບນີ້ເຮັດໃຫ້ເງື່ອນໄຂການທະນາຄານລວມຂອງ ANZ ມີຄວາມອຸດົມສົມບູນຂຶ້ນ. ບັນດາຄຳເວົ້າທີ່ເປັນອັກສອນໃຫຍ່ທີ່ນຳໃຊ້ໃນແຜນນິຍາມຄຳສັບນີ້ມີຄວາມໝາຍດັ່ງທີ່ໄດ້ນິຍາມໃນແຜນຄຳນິຍາມຄຳສັບນີ້.

2 <u>ການຕີຄວາມໝາຍ ແລະ ຄຳນິຍາມ</u>

2.1 <u>ການຕີຄວາມໝາຍ</u>

ໃນສັນຍາສະບັບນີ້, ຍົກເວັ້ນມີການກຳນົດເປັນຢ່າງອື່ນ:

(a) ບຸກຄົນ ຈະລວມທັງການອ້າງອີງເຖິງລັດຖະບານ, ພາກລັດ, ອົງການຈັດຕັ້ງລັດ, ນິຕິບຸກຄົນ, ບໍລິສັດຫູ້ກ, ສະມາຄົມ, ຫຸ້ນສ່ວນ ຫຼື ບຸກຄົນ.

(b) ບຸກຄົນຈະລວມທັງການອ້າງອີງເຖິງ ຕົວແທນທາງກົດໝາຍ, ຜູ້ສືບທອດ ແລະ ຜູ້ໄດ້ຮັບການມອບສິດ.

(c) ຄຳສັບທີ່ບົ່ງບອກຈຳນວນໜ້ອຍ ແລະ ຈຳນວນຫຼາຍສາມາດໃຊ້ປ່ຽນແທນກັນໄດ້.

(d) ການອ້າງອີງເຖິງສັນຍາໃດໜຶ່ງ, ເອກະສານໃດໜຶ່ງ ຫຼື ກົດໝາຍໃດໜຶ່ງ ແມ່ນການອ້າງອີງເຖິງສັນຍາ, ເອກະສານ ຫຼື ກົດໝາຍນັ້ນ (ແລະ ຖ້າມີ ແມ່ນການອ້າງອີງເຖິງບັນຍັດໃດໜຶ່ງຂອງມັນ) ລວມທັງສະບັບປັບປຸງ, ດັດປັບ, ເພີ່ມເຕີມ ຫຼື ຖືກປ່ຽນແທນເປັນແຕ່ລະໄລຍະ;

(e) ຂໍ້, ມາດຕາ, ວັກ ແລະ ຫົວຂໍ້ອື່ນແມ່ນສ້າງຂຶ້ນເພື່ອຄວາມສະດວກເທົ່ານັ້ນແລະບໍ່ມີຜົນໃນການຕີຄວາມໝາຍ.

2.2 <u>ນິຍາມຄຳສັບ</u>

<u>ບັນຊີ</u> ໝາຍເຖິງບັນຊີທີ່ລູກຄ້າເປີດກັບທະນາຄານ.

<u>ການປະກອບເອກະສານເປີດບັນຊີ</u> ໝາຍເຖິງເອກະສານຄຳຮ້ອງທີ່ມີລາຍເຊັນໂດຍ ຫຼື ເຊັນໃນນາມລູກຄ້າ ທີ່ພົວພັນກັບການສ້າງໜຶ່ງ ຫຼື ຫຼາຍບັນຊີຊຶ່ງອາດເປັນການສະໜັບສະໜູນ ຫຼື ປ່ຽນແປງເປັນແຕ່ລະໄລຍະ.

<u>ບັນຊີຕົວຈິງ</u> ໝາຍເຖິງບັນຊີທີ່ລູກຄ້າກຳນົດເພື່ອໃຫ້ມີການນຳໃຊ້ເລກບັນຊີທາງພາບ.

<u>ຕົວແທນ</u> ໝາຍເຖິງບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກລູກຄ້າໃຫ້ເປັນຕົວແທນຂອງຕົນໃນສັນຍາສະບັບນີ້ ແລະ ບັນຊີ ແລະ ການບໍລິການຂອງຕົນ.

<u>ການບໍລິການລວມ</u> ໝາຍເຖິງການບໍລິການສະໜອງໃຫ້ໂດຍທະນາຄານດ້ວຍການທີ່ເຮັດໃຫ້ລູກຄ້າສາມາດສະໜອງການເຂົ້າເຖິງຂໍ້ມູນຂ່າວສານໄປຫາລູກຄ້າບຸກຄົນທີສາມເພື່ອຈຸດປະສົງຂອງການເຮັດການຊຳລະໃຫ້ແກ່ລູກຄ້າ.

<u>ສະກຸນເງິນທີ່ໄດ້ຕົກລົງ</u> ໝາຍເຖິງສະກຸນເງິນທີ່ການຊຳລະໃດໜຶ່ງທີ່ກ່ຽວຂ້ອງກັບບັນຊີ ຫຼື ການບໍລິການຕາມສັນຍາສະບັບນີ້ທີ່ຕ້ອງເຮັດດັ່ງທີ່ໄດ້ຕົກລົງກັນໄວ້ລະຫວ່າງລູກຄ້າແລະທະນາຄານ, ຫຼື ການທີ່ບໍ່ມີຂໍ້ຕົກລົງດັ່ງກ່າວ, ດັ່ງທີ່ທະນາຄານແຈ້ງໃຫ້ລູກຄ້າ.

<u>ສັນຍາ</u> ໝາຍເຖິງເງື່ອນໄຂຕ່າງໆ ແຜນສະເພາະປະເທດ, ແຜນການກຳນົດຝ່າຍຄູ່ຮ່ວມງານ, ແຜນການບໍລິການ, ການປະກອບເອກະສານຂໍເປີດບັນຊີ,ແຜນກຳນົດຄ່າທຳນຽມ, ແລະແຜນນິຍາມຄຳສັບສະບັບນີ້.

<u>ANZ</u> ໝາຍເຖິງກຸ່ມທະນາຄານອົດສະຕຣາລີ ແລະ ນິວຊີແລນຈຳກັດ.

# ແຜນນິຍາມຄຳສັບ

ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ) ໝາຍເຖິງການສົ່ງຂໍ້ມູນຜ່ານລະບົບນຳສົ່ງຂໍ້ມູນລະຫວ່າງສອງສົ້ນແບບເອເລັກໂຕຣນິກແນໃສ່ເພື່ອເຮັດໃຫ້ເພີ່ມຄວາມແຂງແກ່ນ ແລະ ຄວາມປອດໄພໃນການສື່ສານ (ລວມທັງຄຳສັ່ງ) ທີ່ສົ່ງຈາກລູກຄ້າໄປຫາທະນາຄານ, ຫຼື ຈາກທະນາຄານໄປຫາລູກຄ້າ.

ການບໍລິການ ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ) ໝາຍເຖິງການສະໜອງໂດຍທະນາຄານໄປຫາລູກຄ້າ ການເຂົ້າເຖິງ ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ).

ອັດຕາແລກປ່ຽນທີ່ກ່ຽວຂ້ອງ ໝາຍເຖິງອັດຕາແລກປ່ຽນທີ່ທະນາຄານກຳນົດໃນແຕ່ລະໄລຍະ, ຫຼື ຖ້າບໍ່ມີ, ແມ່ນອັດຕາແລກປ່ຽນທີ່ທະນາຄານກຳນົດ.

ບຸກຄົນທີ່ໄດ້ຮັບອະນຸຍາດ ໝາຍເຖິງບຸກຄົນໃດໜຶ່ງທີ່ໄດ້ຮັບອະນຸຍາດຈາກລູກຄ້າ (ຫຼື ຖ້າມີແມ່ນ ຕົວແທນ) ແລະ ແຈ້ງໃຫ້ທະນາຄານຮັບຮູ້ເປັນລາຍລັກອັກສອນເພື່ອເຄື່ອນໄຫວຕາງໜ້າໃຫ້ລູກຄ້າໃນການອອກຄຳສັ່ງ ແລະ ດຳເນີນການເຄື່ອນໄຫວອື່ນໆ, ການຖອນ, ວຽກງານພາຍໃຕ້ສັນຍາສະບັບນີ້ ຫຼື ມີສ່ວນກ່ຽວຂ້ອງກັບການການດຳເນີນງານ ຫຼື ການນຳໃຊ້ການບໍລິການທາງບັນຊີ.

ຜູ້ຊົມໃຊ້ SWIFT ທີ່ໄດ້ຮັບອະນຸຍາດ ໝາຍເຖິງລູກຄ້າ ຫຼື ບຸກຄົນໃດໜຶ່ງທີ່ໄດ້ຂຶ້ນທະບຽນກັບ SWIFT ແລະ ຜູ້ທີ່ປະຕິບັດຢ່າງຖືກຕ້ອງໃນນາມເປັນຝ່າຍໜຶ່ງໃນສັນຍາ SWIFT ທີ່ອະນຸຍາດໃຫ້ມີການເຂົ້າເຖິງການບໍລິການຂໍ້ຄວາມຜ່ານ SWIFT ແລະ ມີເງື່ອນໄຂຄົບຖ້ວນທຸກຢ່າງທີ່ສະໜອງໃຫ້, ເພື່ອຫຼີກເວັ້ນຂໍ້ສົງໄສ ວ່າລູກຄ້າຈະສືບຕໍ່ເປັນຜູ້ນຳໃຊ້ SWIFT ທີ່ໄດ້ຮັບອະນຸຍາດ ເຖິງວ່າບຸກຄົນດັ່ງກ່າວບໍ່ສາມາດປະຕິບັດຕາມເງື່ອນໄຂຜູ້ມີສິດຊົມໃຊ້ອີກຕໍ່ໄປທີ່ກຳນົດໃນສັນຍາວ່າດ້ວຍ SWIFT ທີ່ກ່ຽວຂ້ອງໃນໄລຍະເວລາທີ່ກຳນົດຢູ່ໃນສັນຍາວ່າດ້ວຍ SWIFT ຊຶ່ງເປັນໄລຍະເວລາທີ່ອະນຸຍາດໃຫ້ລູກຄ້າ ຫຼື ຜູ້ຊົມໃຊ້ SWIFT ທີ່ໄດ້ຮັບອະນຸຍາດເພື່ອອອກໄປເລືອກນຳໃຊ້ທາງເລືອກອື່ນໃດໜຶ່ງ.

ຜູ້ນຳໃຊ້ທີ່ໄດ້ຮັບອະນຸຍາດ ໝາຍເຖິງບຸກຄົນໃດໜຶ່ງທີ່ໄດ້ຮັບອະນຸຍາດໃຫ້ອອກຄຳສັ່ງທາງເອເລັກໂຕຣນິກ ໂດຍຜ່ານ ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ) ໃນນາມລູກຄ້າ ແລະ ຜູ້ທີ່ລູກຄ້າໄດ້ກຳນົດໃຫ້ທະນາຄານໃນວິທີການທີ່ທະນາຄານອະນຸຍາດ.

ອຳນາດບໍລິຫານ ໝາຍເຖິງ ລະບຽບການ, ການບໍລິຫານ, ລັດຖະບານ, ອົງການເຄິ່ງລັດຖະບານ, ອົງການບັງຄັບໃຊ້ກົດໝາຍ, ອົງການຊີ້ນຳ, ສານ, ບ່ອນດຳເນີນຄະດີ.

ທະນາຄານ ໝາຍເຖິງທະນາຄານ ANZ ແລະ/ຫຼື ບ່ອນທີ່ເປີດບັນຊີ, ບ່ອນທີ່ມີການບໍລິການ, ສະມາຊິກກຸ່ມທະນາຄານ, ສະມາຊິກກຸ່ມທະນາຄານນັ້ນ.

ເຊັກທະນາຄານ ໝາຍເຖິງ ເຊັກທະນາຄານ ຫຼື ໃບສັ່ງຖອນເງິນທີ່ທະນາຄານອອກ ຫຼື ອອກໃຫ້ໃນນາມທະນາຄານຕາມການສະເໜີຂອງລູກຄ້າ.

ສະມາຊິກກຸ່ມທະນາຄານ ໝາຍເຖິງສະມາຊິກໃດໜຶ່ງຂອງ ANZ, ບໍລິສັດແມ່, ບໍລິສັດລູກ ແລະ ສາຂາຂອງບໍລິສັດແມ່, ແລະ ທຸກໆຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງພວກເຂົາ, ໃນແຕ່ລະກໍລະນີຈະຢູ່ແຈໃດຂອງໂລກກໍຕາມ ແລະລວມທັງທຸກໆສາຂາ ແລະຫ້ອງການຕົວແທນ ຫຼື ຫ້ອງການເຂດ.

ການບໍລິການທີ່ປຶກສາຕໍ່ຜູ້ໄດ້ຮັບຜົນປະໂຫຍດ ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ເພື່ອແຈ້ງໃນນາມຕົວແທນຂອງລູກຄ້າໃຫ້ຜູ້ຮັບເງິນໂອນ ຫຼື ເງິນສິນເຊື່ອໂດຍລູກຄ້າເຂົ້າໃນບັນຊີ.

# ແຜນນິຍາມຄຳສັບ

<ins>ວັນລັດຖະການ</ins> ໝາຍເຖິງມື້ໃດມື້ໜຶ່ງ (ທີ່ບໍ່ແມ່ນວັນເສົາແລະວັນອາທິດ ຫຼື ວັນພັກລັດຖະການຢູ່ໃນປະເທດທີ່ມີບັນຊີໃດໜຶ່ງດຳເນີນການຢູ່ ແລະ ບ່ອນທີ່ມີການຊຳລະ ຫຼື ຮັບເງິນ, ພາຍໃນປະເທດຂອງສະກຸນເງິນທີ່ກ່ຽວຂ້ອງ) ທີ່ທະນາຄານໄດ້ເປີດບໍລິການປົກກະຕິໃນ (i) ປະເທດທີ່ບັນຊີດັ່ງກ່າວເປີດນຳໃຊ້, (ii) ບ່ອນທີ່ຄຳສັ່ງ ຫຼື ການສື່ສານມຸ້ງໄປເຖິງ, ປະເທດທີ່ຄຳສັ່ງ ຫຼື ການສື່ສານດັ່ງກ່າວມຸ້ງໄປເຖິງ ແລະ (iii) ບ່ອນທີ່ເຮັດການຊຳລະ ຫຼື ການຮັບເງິນ ເປັນເງິນຕາທີ່ໃຊ້ໃນລະບອບປົກຄອງພາຍໃນປະເທດ.

<ins>ການບໍລິການຮັບເງິນສົດ</ins> ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ຊຶ່ງປະກອບມີການຮັບເອົາເງິນສົດຈາກສະຖານທີ່ຮັບເງິນ.

<ins>ການບໍລິການສົ່ງເງິນສົດ</ins> ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ຊຶ່ງໃນນັ້ນເງິນສົດທີ່ຈະຖືກຖອນໄປຈາກບັນຊີນັ້ນແລະຈັດສົ່ງໄປເຖິງສະຖານທີ່ສົ່ງມອບເງິນສົດ.

<ins>ຊ່ອງທາງ</ins> ໝາຍເຖິງລະບົບ, ວິທີການ ຊ່ອງທາງອາດຈະເປັນຜ່ານອິນເຕີເນັດ ຫຼື ບໍ່ກໍຕາມ ທີ່ທະນາຄານອາດຈະສະໜອງໃຫ້ ຫຼື ຜູ້ສະໜອງການບໍລິການບຸກຄົນທີ່ສາມາດສະໜອງໃຫ້ ເປັນແຕ່ລະໄລຍະເພື່ອເຮັດໃຫ້ລູກຄ້າຂອງທະນາຄານເຂົ້າເຖິງ ແລະ ນຳໃຊ້ການບໍລິການທະນາຄານ ແລະ ການບໍລິການອື່ນໆທີ່ທະນາຄານສະໜອງໃຫ້ ແລະ ເປັນບ່ອນທີ່ລູກຄ້າອາດຈະເລືອກລົງຊື່ເຂົ້ານຳໃຊ້ (ໃນການປະກອບເອກະສານເປີດບັນຊີ) ຫຼື ຕາມການຕົກລົງກັບທະນາຄານ. ຍົກເວັ້ນມີການຕົກລົງກັນແບບອື່ນລະຫວ່າງທະນາຄານແລະລູກຄ້າ, ບັນດາຊ່ອງທາງທີ່ມັກໃຊ້ໃນການເຂົ້າເຖິງບັນຊີ ຫຼື ນຳໃຊ້ ຫຼື ອອກຄຳສັ່ງຈະແມ່ນຊ່ອງທາງເອເລັກໂຕຣ ນິກ, ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ), ການທະນາຄານ OTC ແລະ ຂໍ້ຄວາມ SWIFT, ແລະ ຊ່ອງທາງທີ່ບໍ່ແນະນຳໃຫ້ໃຊ້ແມ່ນທາງໂທລະສັບ, ອີເມລ໌, ໂທລະສານ ແລະ ແຟັກ.

<ins>ການບໍລິການຮັບເຊັກ</ins> ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ຊຶ່ງລວມທັງການຮັບເຄື່ອງມືຕ່າງໆຈາກຈຸດຮັບຝາກ.

<ins>ການບໍລິການເຊັກຈາກຂ້າງນອກ</ins> ໝາຍເຖິງບັນດາການບໍລິການລຸ່ມນີ້ຂອງທະນາຄານ:

(a) ການອອກເຊັກບໍລິສັດ ໃນຊື່ຂອງລູກຄ້າ.

(b) ການອອກເຊັກທະນາຄານ.

(c) ການອອກເຄື່ອງມືອື່ນໆ ແລະ

(d) ການພິມ, ການອອກເຊັກຕາມຄວາມຕ້ອງການຂອງລູກຄ້າ, ການຈັດຟອມແມັດ, ການຈັດສົ່ງ, ການຈັດເຮືອນຮັກສາການຊຳລະ, ການໄລ່ລຽງບັນຊີຕ້ອງຈ່າຍ ແລະ ການລາຍງານທີ່ຕິດພັນກັບສິ່ງໃດໜຶ່ງຂ້າງເທິງ, ຍົກເວັ້ນການບໍລິການທີ່ກ່ຽວຂ້ອງກັບການອອກໃບສັ່ງຈ່າຍເງິນເປັນເງິນຕາຕ່າງປະເທດ.

<ins>ທຶນທີ່ແຈ້ງແລ້ວ</ins> ໝາຍເຖິງທຶນທີ່ຝາກເຂົ້າໃສ່ ຫຼື ກຽມພ້ອມເປັນສິນເຊື່ອໃນບັນຊີໃດໜຶ່ງທີ່ທະນາຄານໄດ້ຮັບການຊຳລະຢ່າງເຕັມສ່ວນ ແລະ ການຊຳລະສຸດທ້າຍທີ່ບໍ່ສາມາດປີ້ນກັບ ຫຼື ຍົກເລີກ.

<ins>ສະຖານທີ່ຮັບເງິນ</ins> ໝາຍເຖິງສະຖານທີ່ທີ່ຮັບເງິນສົດ ຫຼື ເອກະສານດ້ານການເງິນ ແລ້ວແຕ່ກໍລະນີທີ່ຕ້ອງຖືກຮັບຕາມທີໄດ້ຕົກລົງກັນລະຫວ່າງທະນາຄານແລະລູກຄ້າ.

<ins>ການບໍລິການຊຳລະທີ່ເປັນຄວາມລັບ</ins> ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ ຊຶ່ງໃນນັ້ນການດຳເນີນງານ ຫຼື ການນຳໃຊ້ບັນຊີ ຫຼື ການບໍລິການຕ້ອງຖືກຮັກສາເປັນຄວາມລັບໂດຍລູກຄ້າ ແລະ ມີພຽງແຕ່ບຸກຄົນທີ່ໄດ້ຮັບອະນຸຍາດເທົ່ານັ້ນໄດ້ສິດໃນການດຳເນີນ ຫຼື ນຳໃຊ້ ບັນຊີ ຫຼື ການບໍລິການດັ່ງກ່າວ.

# ແຜນນິຍາມຄຳສັບ

ການຄວບຄຸມ ໝາຍເຖິງ (a) ການຄອບຄອງ, ໂດຍກົງ ຫຼື ທາງອ້ອມຫຼາຍກວ່າ 50% ຂອງເງິນທຶນດອກເບ້ຍໃນນາມບຸກຄົນ, ຫຼື (b) ອຳນາດໃນການຊີ້ນຳ, ຫຼື ອອກການຊີ້ນຳ, ການຄຸ້ມຄອງບໍລິຫານ ແລະ ບັນດານະໂຍບາຍຂອງບຸກຄົນໃດໜຶ່ງ ຊຶ່ງອາດຈະແມ່ນຜ່ານກຳມະສິດໃນການອອກສຽງ ເປັນສັນຍາ ຫຼື ແບບອື່ນໆ.

ເຊັກບໍລິສັດ ໝາຍເຖິງເຊັກທີ່ທະນາຄານສ້າງຂຶ້ນ ຫຼື ຜູ້ຮັບຄຳສັ່ງທະນາຄານສ້າງຂຶ້ນໃນນາມຊື່ ແລະ ຕາງໜ້າແກ່ລູກຄ້າ.

ບຸກຄົນໄດ້ຮັບຄຳສັ່ງໝາຍເຖິງສະຖາບັນທາງການເງິນທີ່ທະນາຄານນຳໃຊ້ເພື່ອເຮັດການຊຳລະໂດຍກົງ ຫຼື ໂດຍທາງອ້ອມໃຫ້ແກ່ຜູ້ຮັບເງິນ ຫຼື ປະຕິບັດການບໍລິການໃດໜຶ່ງທີ່ພົວພັນກັບບັນຊີ ແລະ ລວມທັງບຸກຄົນຮັບຄຳສັ່ງໄລຍະກາງໃດໜຶ່ງ.

ແຜນການຄູ່ຮ່ວມງານ ໝາຍເຖິງເງື່ອນໄຂສະເພາະໃດໜຶ່ງທີ່ນຳໃຊ້ກັບລູກຄ້າຕາມບັນຊີປະເພດນັ້ນໆຂອງລູກຄ້າ.

ແຜນສະເພາະປະເທດ ໝາຍເຖິງບັນດາເງື່ອນໄຂສະເພາະຂອງແຕ່ລະປະເທດທີ່ມີຜົນນຳໃຊ້ກັບບັນຊີ ຫຼື ການບໍລິການດັ່ງທີ່ນຳສະເໜີໃນເອກະສານເງື່ອນໄຂສະເພາະສຳລັບປະເທດ.

ການບໍລິການສະວິບຂ້າມຊາຍແດນ ໝາຍເຖິງການບໍລິການທີ່ທະນາຄານສະໜອງທີ່ພົວພັນກັບການເຄື່ອນຍ້າຍເງິນທຶນລະຫວ່າງບັນຊີຂອງລູກຄ້າທີ່ມີຢູ່ລະບົບການຄຸ້ມຄອງແຕກຕ່າງກັນ.

ລູກຄ້າໝາຍເຖິງຜູ້ສະເໜີທີ່ມີຊື່ໃນເອກະສານເປີດບັນຊີ.

ເວລາຢຸດບໍລິການ ໝາຍເຖິງເວລາຊ້າສຸດ (ທີ່ຕົກລົງກັນ) ສຳລັບທະນາຄານສາມາດຮັບຄຳສັ່ງຈາກລູກຄ້າ.

ແຜນນິຍາມຄຳສັບ ໝາຍເຖິງບັນດານິຍາມ ແລະ ບັນຍັດຕ່າງໆທີ່ກຳນົດໃນແຜນຄຳນິຍາມນີ້ ແລະ/ຫຼື ແຜນນິຍາມຄຳສັບນີ້ແລ້ວແຕ່ເນື້ອໃນຕົວຈິງ.

ສະຖານທີ່ຮັບຝາກ ໝາຍເຖິງສະຖານທີ່ສຳລັບສົ່ງມອບເງິນສົດ ສຳລັບການສົ່ງເງິນສົດຕາມທີ່ລູກ ຄ້າກຳນົດ.

ການບໍລິການການຄຸ້ມຄອງການຫັກເງິນໂດຍກົງ ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ ຊຶ່ງໃນນັ້ນທະນາຄານຈະປະສານງານຕາງໜ້າ ບົດບາດຂອງລູກຄ້າແລະການຊຳລະທີ່ກ່ຽວຂ້ອງ.

ໜ້າທີ່ການຫັກໂດຍກົງ ໝາຍເຖິງອຳນາດຈາກລູກຄ້າໃຫ້ທະນາຄານສົ່ງເງິນຜ່ານເອເລັກໂຕຼນິກຈາກບັນຊີໃດໜຶ່ງໃນຮູບແບບທີ່ທະນາຄານກຳນົດ.

ການບໍລິການຫັກເງິນໂດຍກົງ ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ສຳລັບການໂອນເງິນທາງເອເລັກໂຕຣນິກຈາກບັນຊີໃດໜຶ່ງໄປຫາຜູ້ຮັບເງິນທີ່ກ່ຽວຂ້ອງຕາມການສັ່ງຂອງລູກຄ້າພາຍໃຕ້ອຳນາດການຫັກໂດຍກົງ.

ຊ່ອງທາງການທະນາຄານເອເລັກໂຕຣນິກ ໝາຍເຖິງອິນເຕີເນັດ ຫຼື ອອນລາຍ ຫຼື ຊ່ອງທາງທີ່ຄ້າຍຄືທີ່ທະນາຄານສ້າງຂຶ້ນ ແລະເຮັດໃຫ້ລູກຄ້າສາມາດເຂົ້າເຖິງບັນຊີຂອງຕົນ, ນຳໃຊ້ການບໍລິການໃດໜຶ່ງ ແລະ/ຫຼື ໃຫ້ຄຳສັ່ງ.

ແຜນຄ່າທຳນຽມ ໝາຍເຖິງແຜນຄ່າທຳນຽມໃດໜຶ່ງ ຫຼື ແຜນຄ່າທຳນຽມໃນຈົດໝາຍສະເໜີໃຫ້ທີ່ພົວພັນກັບຄ່າທຳນຽມສຳລັບການເປີດ, ການດຳເນີນ ແລະ ການບຳລຸງຮັກສາບັນຊີໃດໜຶ່ງ ຫຼື ການສະໜອງບໍລິການໃດໜຶ່ງ.

ເຫດສຸດວິໄສ ໝາຍເຖິງເຫດການໃດໜຶ່ງທີ່ຢູ່ນອກເໜືອຂອບເຂດການຄວບຄຸມຂອງທະນາຄານ ຊຶ່ງມີບາງຕົວຢ່າງລຸ່ມນີ້:

# ແຜນນິຍາມຄຳສັບ

(a)ໄຟໄໝ້, ນ້ຳຖ້ວມ, ແຜ່ນດິນໄຫວ, ພະຍຸ ຫຼື ເຫດການທາງທຳມະຊາດອື່ນໃດໜຶ່ງ.

(b) ການປະທ້ວງ ຫຼື ຂໍ້ຂັດແຍ່ງທາງແຮງງານໃດໜຶ່ງ;

(c) ສົງຄາມ, ການກໍ່ກະບົດ, ການກໍ່ການຮ້າຍ, ການລຸກຮືຂຶ້ນຕໍ່ສູ້.

(d) ການກະທຳ ຫຼື ການທີ່ບໍ່ກະທຳຂອງອົງການອຳນາດບໍລິການ.

(e) ການປ່ຽນແປງໃນກົດໝາຍ ຫຼື ຄຳສັ່ງໃດໜຶ່ງຂອງອົງການອຳນາດບໍລິຫານ.

(f) ການຫຼົ້ມເຫຼວ, ການລົບກວນ ຫຼື ການແຊກແຊງໃນດ້ານການສື່ສານ, ໄຟຟ້າ ແລະ ສິ່ງອຳ ນວຍຄວາມສະດວກອື່ນໆ.

(g) ຄວາມຫຼົ້ມເຫຼວໃນດ້ານເຕັກນິກ, ການລົບກວນ ຫຼື ການແຊກແຊງໃນລະບົບຄອມພິວເຕີ ຫຼື ອຸປະກອນ ຫຼື ຊ່ອງທາງໃດໜຶ່ງ (ອາດຈະເກີດຂຶ້ນຍ້ອນບັນຫາຮາດແວ ຫຼື ຊອບແວ), ແລະ

(h) ການຫຼົ້ມເຫຼວ, ການລົບກວນ ຫຼື ການແຊກແຊງຂອງການບໍລິການໃດໜຶ່ງທີ່ສະໜອງໃຫ້ໂດຍທະນາຄານ ຫຼື ບຸກຄົນທີສາມ ຫຼື ລະບົບບຸກຄົນທີສາມໃດໜຶ່ງ.

<u>ບັນຊີເງິນຕາຕ່າງປະເທດ</u> ໝາຍເຖິງບັນຊີທີ່ມີກຳນົດດຳເນີນເປັນເງິນຕາໃດໜຶ່ງທີ່ບໍ່ແມ່ນເງິນທີ່ນຳໃຊ້ໃນປະເທດທີ່ບັນຊີດຳເນີນຢູ່.

<u>ຂໍ້ມູນຂ່າວສານ</u> ໝາຍເຖິງເນື້ອໃນຂອງຂໍ້ຄວາມ SWIFT ທີ່ທະນາຄານສົ່ງໄປຫາລູກຄ້າ.

<u>ຄຳສັ່ງ</u> ໝາຍເຖິງທຸກໆການສະເໜີແລະຄຳສັ່ງ (ລວມທັງຄຳສັ່ງທີ່ມີຢູ່) ທີ່ພົວພັນກັບບັນຊີ ຫຼື ການບໍລິການທີ່ລູກຄ້າ (ຫຼື ບາງຄັ້ງແມ່ນຕົວແທນ) ສົ່ງອອກໄປ ແລະ ທະນາຄານໄດ້ຮັບໂດຍຜ່ານຊ່ອງທາງໃດໜຶ່ງ (ອາດຈະເປັນຊ່ອງທາງທີ່ແນະນຳ ຫຼື ຊ່ອງທາງບໍ່ແນະນຳ) ຫຼື ວິທີອື່ນໆທີ່ທະນາຄານ ແລະ ລູກຄ້າຕົກລົງກັນ ແລະ "ເຄື່ອງມືຄຳສັ່ງ" ທີ່ໃຫ້ຜົນດຽວກັນ.

<u>ການບໍລິການສິນເຊື່ອ Insta</u> ໝາຍເຖິງການບໍລິການທີ່ທະນາຄານສະໜອງໃຫ້ລູກຄ້າຊຶ່ງທະນາຄານຈະເອົາເງິນເຂົ້າບັນຊີຢ່າງເຕັມມູນຄ່າ ຫຼື ສ່ວນໜຶ່ງຂອງທຶນທີ່ຄາດວ່າຈະໄດ້ຮັບໂດຍທະນາຄານສຳລັບບັນຊີຂອງລູກຄ້າກ່ອນທະນາຄານໄດ້ຮັບທຶນດັ່ງກ່າວຢ່າງເຕັມມູນຄ່າ.

<u>ເຄື່ອງມື</u> ໝາຍເຖິງເຊັກ (ລວມທັງ PDC), ໃບຮຽກເກັບ, ໃບສັ່ງຈ່າຍ ແລະ ເຄື່ອງມືອື່ນໆໃດໜຶ່ງທີ່ຄ້າຍຄືກັນ.

<u>ບັນຊີຕາມດອກເບ້ຍເໝາະສົມ</u> ໝາຍເຖິງບັນຊີໃດໜຶ່ງທີ່ເຂົ້າຮ່ວມໃນການບໍລິການດອກເບ້ຍເໝາະສົມ.

<u>ຜູ້ເຂົ້າຮ່ວມອັດຕາດອກເບ້ຍເໝາະສົມ</u> ໝາຍເຖິງຜູ້ໃກ້ສິດຂອງລູກຄ້າທີ່ເຂົ້າຮ່ວມໃນການບໍລິການອັດຕາດອກເບ້ຍເໝາະສົມ.

<u>ການບໍລິການດອກເບ້ຍເໝາະສົມ</u> ໝາຍເຖິງການບໍລິການສະໜອງໂດຍທະນາຄານ ຊຶ່ງໃນນັ້ນທະນາຄານ ສະໜອງໃຫ້ລູກຄ້າໃນອັດຕາດອກເບ້ຍທີ່ເນັ້ນຄວາມສົມດູນໃນບັນຊີຂອງລູກຄ້າ ຫຼື ບັນຊີຂອງຜູ້ທີ່ມີການພົວພັນກັບທະນາຄານ.

<u>ການບໍລິການຍ້າຍທີ່ຕັ້ງດອກເບ້ຍ</u> ໝາຍເຖິງການບໍລິການທີ່ສະໜອງໃຫ້ໂດຍທະນາຄານທີ່ທະນາຄານເຄື່ອນໄຫວຕາມຄຳສັ່ງຂອງລູກຄ້າໃນການຊຳລະດອກເບ້ຍຕາມດຸນສິນເຊື່ອໃນໜຶ່ງ ຫຼື ຫຼາຍບັນຊີແລ້ວແຕ່ລູກຄ້າຈະສັ່ງແທນບັນຊີອື່ນໆ.

<u>ການຊຳລະລະຫວ່າງປະເທດ</u> ໝາຍເຖິງ (i) ການຊຳລະຈາກບັນຊີໜຶ່ງໄປຫາບັນຊີຜູ້ຮັບເງິນທີ່ຢູ່ປະເທດທີ່ຕ່າງຈາກປະເທດທີ່ບັນຊີດຳເນີນການຢູ່ ຫຼື (ii) ການຊຳລະທີ່ເຮັດເປັນເງິນຕາທີ່ບໍ່ແມ່ນເງິນຕາ

# ແຜນນິຍາມຄຳສັບ

ຂອງປະເທດດຳເນີນບັນຊີ ແລະ/ຫຼື ເງິນຕາດັ່ງກ່າວ ບໍ່ສາມາດນຳໃຊ້ໃນການຊື້ຂາຍພາຍໃນປະເທດ.

ເຄື່ອງມືທີ່ໃຊ້ບໍ່ໄດ້ ໝາຍເຖິງເຄື່ອງມືທີ່ບໍ່ສາມາດໃຊ້ ໄດ້ຕາມການກຳນົດຂອງທະນາຄານຍ້ອນສາເຫດ ໃດໜຶ່ງ, ລວມທັງການເປ່ເພຂອງເຄື່ອງມືດັ່ງກ່າວ (ຈີກ ຫຼື ຂາດ), ການດຳເນີນທີ່ໃຊ້ບໍ່ໄດ້ຂອງ ເຄື່ອງມືໃດໜຶ່ງ, ເຄື່ອງມືເປິະເປື້ອນ, ລູກຄ້າບໍ່ມີສິດ ໃນການນຳໃຊ້, ບໍ່ມີເງິນພຽງພໍຢູ່ໃນບັນຊີສຳລັບ ການຊຳລະເຄື່ອງມືດັ່ງກ່າວ ຫຼື ມີການຍົກເລີກ ຫຼື ຢຸດການຊຳລະຂອງເຄື່ອງມືດັ່ງກ່າວ.

ກົດໝາຍ ໝາຍເຖິງສົນທິສັນຍາ, ກົດໝາຍ, ລັດຖະທຳມະນູນ, ລະບຽບການ, ກົດລະບຽບ, ຄຳ ສັ່ງຂອງສານ, ມາດຕະຖານຂອງອຳນາດໃດໜຶ່ງ ຫຼື ການສະເໜີໃດໜຶ່ງ, ຄຳສັ່ງ, ການຊີ້ນຳ, ການ ແນະນຳ, ແຈ້ງການ, ລະຫັດ, ການຕັດສິນ, ຫຼື ປະກາດທາງນະໂຍບາຍ ຫຼື ການນຳໃຊ້ອຳນາດ ໃດໜຶ່ງ ທີ່ຢູ່ພາຍໃຕ້ກົດໝາຍ ຫຼື ຖ້າຫາກບໍ່ຢູ່ໃນ ການຄຸ້ມຄອງຂອງກົດໝາຍ ກ່ຽວຂ້ອງກັບການ ປະຕິບັດຕາມລະບອບການປົກຄອງແມ່ນຖືວ່າເປັນ ປະເພນີ.

ກ່ອງລ໋ອກບ໋ອກ ໝາຍເຖິງສະຖານທີ່ທີ່ກຳນົດໃນ ທະນາຄານ ຫຼື ສະຖານທີ່ອື່ນໆໃດໜຶ່ງ (ລວມທັງຜູ້ ຮັບຄຳສັ່ງໃຫ້ປະຕິບັດ) ດັ່ງທີ່ລູກຄ້າ ແລະ ທະນາ ຄານອາດຈະຕົກລົງຮ່ວມກັນ ເພື່ອໃຊ້ເຂົ້າໃນການ ຮັບເອົາ ແລະ ເກັບຮັກສາໄວ້ຢ່າງປອດໄພ (ຈົນ ກວ່າຈັດຕັ້ງດຳເນີນ) ເຄື່ອງມືດັ່ງກ່າວໃດໜຶ່ງທີ່ຜູ້ ຊຳລະຫຼາຍຄົນເອົາມາຝາກເພື່ອໂອນໃຫ້ລູກຄ້າ.

ການບໍລິການກ່ອງລ໋ອກບ໋ອກ ໝາຍເຖິງການ ບໍລິການຂອງທະນາຄານທີ່ທະນາຄານສະໜອງໃຫ້ ລູກຄ້າຄວາມສະດວກໃນການເຂົ້າເຖິງເຄື່ອງມືທີ່ ຝາກໄວ້ໃນລ໋ອກບ໋ອກ ຫຼື ສຳລັບຄຳສັ່ງໃນການ ຊຳລະທາງເອເລັກໂຕຣນິກທີ່ທະນາຄານຈະຮັບເອົາ ແລະ ດຳເນີນການ ຊຶ່ງຈະລວມເອົາການບໍລິການ ຮັບເຊັກ ແລະ ການບໍລິການອື່ນໆສຳລັບແຕກຖອນ ແລະດຳເນີນການເຊັກ, ການເກັບຂໍ້ມູນ, ການໄລ່ ລຽງໃບແຈ້ງເກັບເງິນ ແລະ ການສະໜອງການ ບໍລິການລາຍງານການໄລ່ລຽງ.

ການສູນເສຍ ໝາຍເຖິງການເຮັດເສຍ, ພັນທະ ໜີ້ສິນ, ການເປ່ເພ, ຕົ້ນທຶນ (ລວມທັງຕົ້ນທຶນທາງ ກົດໝາຍຕາມພື້ນຖານການຈ່າຍຄ່າເສຍຫາຍເຕັມ ມູນຄ່າ), ການຮ້ອງຟ້ອງ, ການດຳເນີນການທາງ ກົດ ໝາຍ, ຫຼື ການເສຍຫາຍໃດໜຶ່ງທີ່ເກີດຂຶ້ນ ຈາກສັນຍາ, ລັດຖະທຳມະນູນ, ການເຮັດຜິດ ກົດໝາຍ ຫຼື ດ້ວຍຮູບແບບໃດໜຶ່ງ ແລະ ລາຍ ຈ່າຍຕ່າງໆ (ລວມທັງການສູນເສຍທາງກົງ, ທາງ ອ້ອມ ແລະ ຜົນຕາມມາ, ການຂາດທຶນ ແລະ ການຂາດຄວາມເອົາໃຈໃສ່), ແລະ ເຖິງວ່າຈະ ສາມາດຄາດຄະເນໄດ້ ຫຼື ບໍ່ໄດ້ກໍ່ຕາມ.

ການບໍລິການ MACUG ໝາຍເຖິງການບໍລິການ ດ້ານສິ່ງແວດລ້ອມກຸ່ມຜູ້ນຳໃຊ້ການບໍລິການ ບໍລິຫານແບບປິດໃຫ້ແກ່ສະມາຊິກ SWIFT ໂດຍ ທະນາຄານ ແລະ ສ້າງຂຶ້ນລະຫວ່າງລູກຄ້າ, ທະນາຄານ ແລະ ຜູ້ນຳໃຊ້ SWIFT ທີ່ໄດ້ຮັບ ອະນຸຍາດອື່ນໃດໜຶ່ງ.

ໜ້າທີ່ ໝາຍເຖິງອຳນາດຈາກບຸກຄົນທີສາມ (ທີ່ ອາດຈະແມ່ນລູກຄ້າຂອງລູກຄ້າ) ທີ່ມອບໃຫ້ ທະນາຄານເພື່ອດຳເນີນການໂອນເງິນທາງເອເລັກ ໂຕຣນິກຈາກບັນຊີຂອງບຸກຄົນທີສາມດັ່ງກ່າວໄປຫາ ບັນຊີຂອງລູກຄ້າ.

ບັນຊີຫຼັກ ໝາຍເຖິງບັນຊີທີ່ມອບໝາຍໃຫ້ເປັນບັນຊີ ຫຼັກສຳລັບການບໍລິການສະວິບ.

ການແລກປ່ຽນຊື້ຂາຍສິນຄ້າ ລວມເອົາການຂາຍ ຫຼື ການຊື້ຂາຍສິນຄ້າ, ການນຳເຂົ້າ-ສົ່ງອອກ ສິນຄ້າ, ການຈັດຊື້ສິນຄ້າ, ຈົດໝາຍສິນເຊື່ອ ຫຼື ການເກັບເອກະສານທີ່ພົວພັນກັບການແລກປ່ຽນຊື້

ຂາຍສິນຄ້າ, ການຊຳລະລ່ວງໜ້າສຳລັບສິນຄ້າ ແລະ ອື່ນໆ.

ການບໍລິການສະວິບເຂົ້າອອກຫຼາຍເທື່ອ ໝາຍເຖິງ ການບໍລິການຂອງທະນາຄານທີ່ລວມເອົາການເຄື່ອນຍ້າຍທຶນລະຫວ່າງບັນຊີຂອງລູກຄ້າ ແລະ ບັນຊີຂອງບໍລິສັດຂຶ້ນກັບຂອງລູກຄ້າ.

ບັນຊີລວມສູນແຫ່ງຊາດ ໝາຍເຖິງບັນຊີທີ່ລວມເອົາການບໍລິການລວມສູນແຫ່ງຊາດ.

ຜູ້ເຂົ້າຮ່ວມການລວມສູນແຫ່ງຊາດ ໝາຍເຖິງ ບັນດາບໍລິສັດສາຂາຂອງລູກຄ້າຊຶ່ງບັນຊີຂອງເຂົາເຈົ້າເຂົ້າຮ່ວມການບໍລິການລວມສູນແຫ່ງຊາດ.

ການບໍລິການລວມສູນແຫ່ງຊາດ ໝາຍເຖິງການບໍລິການຂອງທະນາຄານຊຶ່ງໃນນັ້ນບັນດາດຸນຂອງບັນດາບັນຊີທີ່ກ່ຽວຂ້ອງຂອງລູກຄ້າ ຫຼື ສາຂາຂອງມັນຖືກກຳນົດໃນໜຶ່ງ ຫຼື ສອງສະກຸນເງິນໄດ້ຮັບການລວບລວມເຂົ້າກັບເພື່ອຈຸດປະສົງຂອງການຄິດໄລ່ດອກເບ້ຍ.

ການທະນາຄານ OTC ໝາຍເຖິງການບໍລິການການທະນາຄານເທິງໂຕະທີ່ສາຂາໃດໜຶ່ງຂອງທະນາຄານ.

ບັນຊີທີ່ເຂົ້າຮ່ວມ ໝາຍເຖິງບັນຊີທີ່ຖືກກຳນົດໃຫ້ເປັນບັນຊີເຂົ້າຮ່ວມໃນການບໍລິການສະວິບ.

PDC ໝາຍເຖິງເຊັກທີ່ລົງວັນທີຕາມຫຼັງ.

ລາຍການ PDC ໝາຍເຖິງລາຍການທີ່ປະກອບມີລາຍລະອຽດດັ່ງລຸ່ມນີ້:

(a) ເລກທີເຊັກ ແລະ ວັນທີຂອງ PDC

(b) ຜູ້ຖອນເຊັກ, ແລະ

(c) ມູນຄ່າຂອງ PDC

ການບໍລິການຄຸ້ມຄອງເຊັກລົງວັນທີຕາມຫຼັງ ໝາຍເຖິງການບໍລິການຂອງທະນາຄານສຳລັບການເກັບຮັກສາແລະຄຸ້ມຄອງ PDC.

ເຫດການຍົກເລີກທີ່ສຳຄັນ ໝາຍເຖິງເຫດການໃດໜຶ່ງທີ່ພາຍຫຼັງອອກແຈ້ງການ ຫຼື ເກີນເວລາ ຫຼື ທັງສອງ ຈະຖືວ່າເປັນເຫດການຍົກເລີກ.

ການບໍລິການຊື້ ແລະ/ຫຼື ການຫຼຸດລາຄາ ໝາຍເຖິງ ການບໍລິການຂອງທະນາຄານໃນການເອົາເງິນເຂົ້າບັນຊີຂອງລູກຄ້າສຳລັບມູນຄ່າທັງໝົດ ຫຼື ສ່ວນໃດໜຶ່ງຂອງມູນຄ່າ, ຕາມລຳດັບ, ຂອງເຄື່ອງມືແລະມູນຄ່າໃດໜຶ່ງທີ່ຕ້ອງຮັບຂອງລູກຄ້າກ່ອນການຊຳ ລະ ຫຼື ວັນທີອອກມູນຄ່າ.

ການບໍລິການສະພາບຄ່ອງທີ່ກ່ຽວຂ້ອງ ໝາຍເຖິງ ການບໍລິການສະວິບຜ່ານຊາຍແດນ, ການບໍລິການສະວິບເຂົ້າໄດ້ຫຼາຍເທື່ອ, ການບໍລິການດອກເບ້ຍເໝາະສົມ, ການບໍລິການປ່ຽນທີ່ຕັ້ງດອກເບ້ຍ ແລະ ການບໍລິການລວມສູນແຫ່ງຊາດ.

ການບໍລິການລາຍງານ ໝາຍເຖິງການບໍລິການສະໜອງໂດຍທະນາຄານສຳລັບການຮັບແລະສົ່ງດຸນ ແລະຂໍ້ມູນຂ່າວສານການແລກປ່ຽນຊື້ຂາຍທີ່ພົວພັນກັບບັນຊີ ຫຼື ໜຶ່ງ ຫຼື ຫຼາຍບັນຊີຂອງລູກຄ້າກັບທະນາຄານທີສາມແລະການລາຍງານຂໍ້ມູນຂ່າວສານດັ່ງກ່າວໃຫ້ລູກຄ້າຮັບຊາບ.

ການປະຕິບັດວິໄນ ໝາຍເຖິງການປະຕິບັດວິໄນທາງເສດຖະກິດ ຫຼື ທາງການຄ້າໃດໜຶ່ງທີ່ສ້າງຂຶ້ນໂດຍອຳນາດບໍລິຫານ.

SCORE ໝາຍເຖິງການບໍລິການດ້ານສະພາບແວດລ້ອມບໍລິສັດມາດຕະຖານທີ່ສ້າງຂຶ້ນແລະບໍລິຫານຕາມSWIFT.

ການຄ້ຳປະກັນ ໝາຍເຖິງການເຊົ່າຊື້, ສິດທິໃນການຄອບຄອງ, ຄ່າບໍລິການ ຫຼື ປະກັນໄພອື່ນໆ.

ເຄື່ອງມືຮັກສາຄວາມປອດໄພ ໝາຍເຖິງສັນຍາລັກຄວາມປອດໄພ, ກະແຈເອເລັກໂຕຣນິກ ຫຼື ເຄື່ອງມືທີ່ຄ້າຍຄື.

ການບໍລິການ ໝາຍເຖິງການບໍລິການ, ສິ່ງອຳນວຍຄວາມສະດວກ, ເງິນກູ້, ການຖອນເກີນບັນຊີ,

ການຕໍ່ສິນເຊື່ອ ຫຼື ຜະລິດຕະພັນໃດໜຶ່ງ, ການຊ່ວຍເຫຼືອ, ການຊຸກຍູ້ໃດໜຶ່ງທີ່ທະນາຄານສະໜອງໃຫ້ແກ່ລູກຄ້າ.

ຄູ່ຮ່ວມການບໍລິການ ໝາຍເຖິງບຸກຄົນທີ່ທະນາຄານເລືອກໃນແຕ່ລະໄລຍະເພື່ອຮັບການສື່ສານ (ລວມທັງຄຳສັ່ງ) ທີ່ລູກຄ້າສົ່ງມາ, ຜ່ານ ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ) ເພື່ອປຸງແຕ່ງແລະສົ່ງຕໍ່ໃຫ້ທະນາຄານ.

ແຜນບໍລິການ ໝາຍເຖິງບັນດາເງື່ອນໄຂສະເພາະທີ່ນຳໃຊ້ກັບການບໍລິການດັ່ງທີ່ສ້າງເປັນເອກະສານແຜນບໍລິການສະເພາະ ແລະ/ຫຼື ແຜນບໍລິການດັ່ງກ່າວ ແລ້ວແຕ່ກໍລະນີ.

ການຄ້າບໍລິການ ໝາຍເຖິງສິ່ງອຳນວຍຄວາມສະດວກສາທາລະນະ, ຄ່າເຊົ່າ, ຄ່າກວດສອບ, ຄ່າໂຮງແຮມ ແລະ ຄ່າທີ່ພັກ, ຄ່າທາງກົດໝາຍ, ຄ່າໂຄສະນາແລະສົ່ງເສີມ, ຄ່າລິຂະສິດແລະທະບຽນ, ຄ່າຈົດທະບຽນ, ລາຍຈ່າຍບັ້ນປົ້ວ ແລະອື່ນໆ.

ຜູ້ເຂົ້າຮ່ວມສະວີບ ໝາຍເຖິງບັນດາສາຂາຂອງລູກຄ້າຜູ້ທີ່ມີບັນຊີມາເຂົ້າຮ່ວມໃນການບໍລິການສະວີບເຂົ້າໄດ້ຫຼາຍເທື່ອ.

ການບໍລິການສະວີບ ໝາຍເຖິງການບໍລິການຂອງທະນາຄານລວມເອົາການເຄື່ອນຍ້າຍທຶນຈາກບັນຊີໃນປະເທດດຽວກັນເພື່ອເປັນການສ້າງຖານະໃຫ້ເງິນສົດຫຼາຍຈຸດເຂົ້າເປັນຈຸດດຽວກັນ ຫຼື ສຳລັບການຮັກສາສະພາບຄ່ອງແບບລວມສູນ.

SWIFT ໝາຍເຖິງ S.W.I.F.T. SCRL ຊຶ່ງແມ່ນສະມາຄົມການຮ່ວມມືດ້ານພັນທະໜີ້ສິນຈຳກັດ Belgian ທີ່ຕັ້ງຢູ່ Avenue Adele 1, B-1310 La Hulpe, Belgium.

ສັນຍາວ່າດ້ວຍ SWIFT ໝາຍເຖິງສັນຍາລະຫວ່າງ SWIFT ແລະ ລູກຄ້າ (ຫຼືຜູ້ນຳໃຊ້ SWIFT ທີ່ໄດ້ຮັບອະນຸຍາດຂອງມັນ) ຫຼື ທະນາຄານ, ແລ້ວແຕ່ກໍລະນີ, ທີ່ພົວພັນກັບການນຳໃຊ້ການບໍລິການຂໍ້ຄວາມ SWIFT.

ການສ້າງເອກະສານ SWIFT ໝາຍເຖິງບັນດາຫຼັກການ, ເງື່ອນໄຂ, ລະບຽບ, ນະໂຍບາຍ, ຂໍ້ແນະນຳ ແລະ ຂັ້ນຕອນທີ່ກ່ຽວຂ້ອງກັບການບໍລິການຂໍ້ຄວາມ SWIFT ຫຼື ໃນການສົ່ງແລະຮັບຂໍ້ຄວາມ SWIFT ຕາມທີ່ໄດ້ລະບຸໄວ້ໃນສັນຍາ SWIFT ຫຼື ໄດ້ແຈ້ງໃຫ້ລູກຄ້າ (ຫຼື ຜູ້ນຳໃຊ້ SWIFT ທີ່ໄດ້ຮັບອະນຸຍາດຂອງມັນ) ໂດຍ SWIFT ຫຼື ທະນາຄານເປັນແຕ່ລະໄລຍະ.

ຂໍ້ຄວາມ SWIFT ໝາຍເຖິງການສື່ສານທາງເອເລັກໂຕຣນິກ ຫຼື ເປັນຟາຍລ໌ສົ່ງ ຫຼື ປະກົດວ່າຖືກສົ່ງໂດຍຜ່ານການບໍລິການຂໍ້ຄວາມ SWIFT.

ການບໍລິການຂໍ້ຄວາມ SWIFT ໝາຍເຖິງການບໍລິການຂໍ້ຄວາມ SWIFT ທີ່ມີເພື່ອແລກປ່ຽນຂໍ້ຄວາມ SWIFT ລະຫວ່າງລູກຄ້າ ຫຼື ຜູ້ນຳໃຊ້ SWIFT ທີ່ໄດ້ຮັບອະນຸຍາດຂອງມັນໃນແຕ່ລະໄລຍະ, ລວມທັງການສົ່ງຜ່ານ SCORE ຫຼື ການບໍລິການ MACUG.

ອາກອນ ໝາຍເຖິງອາກອນ, ຄ່າທຳນຽມ, ການເກັບຄ່າໃດໜຶ່ງ, ພາສີ ຫຼື ຄ່າອື່ນໆ ຫຼື ການຫັກໄວ້ທີ່ມີລັກສະນະຄ້າຍຄື (ລວມທັງຄ່າປັບໃໝ ຫຼື ດອກເບ້ຍທີ່ຕ້ອງຊຳລະພົວພັນກັບຄວາມບໍ່ສາມາດຊຳລະ ຫຼື ການຊັກຊ້າໃນການຊຳລະສິ່ງດັ່ງກ່າວ).

ເຫດການຍົກເລີກ ໝາຍເຖິງ ການເກີດຂຶ້ນຂອງໜຶ່ງໃນບັນດາເຫດການທີ່ພົວພັນກັບລູກຄ້າດັ່ງລຸ່ມນີ້:

(a) ການລະເມີດສັນຍາ. ຄວາມບໍ່ສາມາດຂອງລູກຄ້າໃນການປະຕິບັດຕາມ, ປະຕິບັດ ຫຼື ນັບຖືຫຼັກການ ຫຼື ເງື່ອນໄຂໃດໜຶ່ງທີ່ຢູ່ໃນສັນຍາ ແລະ ຄວາມຫຼົ້ມເຫຼວດັ່ງກ່າວບໍ່ໄດ້ຮັບການແກ້ໄຂໃນວັນທີ ຫຼື ກ່ອນວັນທີ 14 ພາຍຫຼັງໄດ້ຮັບແຈ້ງການກ່ຽວກັບຄວາມຫຼົ້ມເຫຼວດັ່ງກ່າວຈາກທະນາຄານ.

(b) ການລົ້ມລະລາຍ. ລູກຄ້າ (i) ຖືກຫຍຸບເລີກ, ບໍ່ມີຄວາມສາມາດດ້ານການເງິນ ຫຼື ບໍ່ສາມາດຊຳລະໜີ້ສິນ ຫຼື ບໍ່ຮັບເປັນລາຍລັກອັກສອນຄວາມບໍ່ສາມາດໃນການຊຳລະໜີ້ສິນຂອງຕົນໃນເມື່ອຮອດກຳນົດຊຳລະ; (ii) ໄດ້ເຮັດການມອບໝາຍວຽກໂດຍລວມ, ການຈັດວາງ, ຫຼື ການປະສານສົມທົບກັບ ຫຼື ສຳລັບຜົນປະໂຫຍດຂອງເຈົ້າໜີ້ຂອງຕົນ; (iii) ປະກອບເປັນ ຫຼື ໄດ້ປະກອບຕ້ານຕົນຂັ້ນຕອນທາງກົດໝາຍເພື່ອຊອກຫາການຕັດສິນກ່ຽວກັບຄວາມຫຼົ້ມເຫຼວທາງການເງິນ ຫຼື ລົ້ມລະລາຍ ຫຼື ການບັນເທົາອື່ນໆໃດໜຶ່ງພາຍໃຕ້ກົດໝາຍວ່າດ້ວຍການຫຼົ້ມເຫຼວດ້ານການເງິນ ຫຼື ການລົ້ມລະລາຍ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງທີ່ກະທົບໃສ່ສິດຂອງເຈົ້າໜີ້, ຫຼື ມີການສະເໜີໃຫ້ປິດບໍລິສັດ ຫຼື ຂາຍບໍລິສັດ; (iv) ມີມະຕິໃຫ້ມີການຍົກເລີກ, ບໍລິຫານ ຫຼື ຂາຍບໍລິສັດ; (v) ຊອກຫາ ຫຼື ໄດ້ຮັບການແຕ່ງຕັ້ງຂອງຜູ້ບໍລິຫານ, ຜູ້ຂາຍຊົ່ວຄາວ, ຜູ້ຮັກສາ, ຜູ້ຮັບ, ຜູ້ໄດ້ຮັບການມອບສິດ, ຜູ້ລ້ຽງດູ ຫຼື ພະນັກງານອື່ນໃດໜຶ່ງທີ່ຄ້າຍຄື ສຳລັບບໍລິສັດ ຫຼື ສ່ວນໃດໜຶ່ງ ຫຼື ທັງໝົດຊັບສິນຂອງລູກຄ້າ; (vi) ມີຝ່າຍທີ່ມີຄວາມເຂັ້ມແຂງເຂົ້າມາເປັນເຈົ້າຂອງທັງໝົດ ຫຼື ສ່ວນໃຫຍ່ຂອງຊັບສິນຂອງມັນ, ຫຼື ມີຄວາມກົດດັນ, ການດຳເນີນ, ການຕິດຄັດ, ຖືກແຍກອອກ, ຫຼື ຂະບວນການທາງກົດໝາຍອື່ນໆທີ່ດຳເນີນຕ້ານກັບບໍລິສັດ; (vii) ຢູ່ພາຍໃຕ້ເຫດການທີ່ກ່ຽວຂ້ອງກັບມັນ ພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ ມີຜົນກະທົບຄ້າຍຄືກັນກັບຜົນສະທ້ອນຂອງເຫດການທີ່ລະບຸໃນວັກ (i) ຫາ (vi); ຫຼື (viii) ດຳເນີນການເຄື່ອນໄຫວໃດໜຶ່ງທີ່ເພີ່ມເຕີມ, ສະແດງໃຫ້ເຫັນການເຫັນດີເຫັນພ້ອມຂອງມັນໃນ, ການຮັບຮອງ, ຫຼື ການເຂົ້າໄປມີສ່ວນກ່ຽວຂ້ອງກັບບັນດາການເຄື່ອນໄຫວ ຫຼື ສະຖານະການທີ່ກ່າວມາຂ້າງເທິງ.

(c) ການປ່ຽນແປງທີ່ມີຜົນກະທົບທາງລົບ. ມີການປ່ຽນແທງທາງລົບເກີດຂຶ້ນກັບທີ່ຕັ້ງດ້ານການເງິນຂອງລູກຄ້າ ທີ່ທະນາຄານພິຈາລະນາແລະໄດ້ຕັດສິນໃຈວ່າອາດຈະມີຜົນກະທົບຕໍ່ຄວາມສາມາດຂອງລູກຄ້າໃນການປະຕິບັດພັນທະຂອງຕົນພາຍໃຕ້ສັນຍາສະບັບນີ້.

(d) ການຜິດກົດໝາຍ. ເຫດການ ຫຼື ສະຖານະການທີ່ເກີດຂຶ້ນພົວພັນກັບຝ່າຍໃດໜຶ່ງທີ່ກາຍເປັນ, ຫຼື ໃນໄລຍະເວລາໃດໜຶ່ງຈະກາຍເປັນຜູ້ຜິດກົດ

ໝາຍ ຍ້ອນເຫດຜົນໃດໜຶ່ງ, ສຳລັບຝ່າຍໜຶ່ງໃນການດຳເນີນພັນທະໃດໜຶ່ງໃນການເຮັດການຊຳລະ ຫຼື ຈັດສົ່ງພາຍໃຕ້ສັນຍາສະບັບນີ້ ຫຼື ເພື່ອປະຕິບັດຕາມບັນດາບັນຍັດອື່ນໆໃດໜຶ່ງຂອງສັນຍາສະບັບນີ້.

<u>ບຸກຄົນທີສາມ</u> ໝາຍເຖິງຜູ້ຮັບເໝົາ ຫຼື ຕົວແທນເອກະລາດ ລວມທັງ ຜູ້ຮັບຊ່ວງການ, ຜູ້ຮັບຄຳສັ່ງປະຕິບັດ ຫຼື ທະນາຄານຮ່ວມມື (ອາດຈະເປັນອົງການທີ່ຕັ້ງຢູ່ໃນປະເທດດຽວກັນກັບລູກຄ້າ ຫຼື ທະນາຄານ).

<u>ລະບົບບຸກຄົນທີສາມ</u> ໝາຍເຖິງການຊຳລະ, ການຈັດການ, ການແກ້ໄຂ ຫຼື ລະບົບອື່ນໃດໜຶ່ງທີ່ສະໜອງໃຫ້ໂດຍ ຫຼື ສ້າງຂຶ້ນກັບໜຶ່ງຫຼືຫຼາຍບຸກຄົນທີສາມ.

<u>ຜູ້ນຳໃຊ້</u> ໝາຍເຖິງບຸກຄົນໃດໜຶ່ງທີ່ຖືກກຳນົດເປັນຜູ້ນຳໃຊ້ທີ່ພົວພັນກັບຊ່ອງທາງການທະນາຄານທາງເອເລັກໂຕຣນິກໃນເອກະສານເປີດບັນຊີ ຫຼື ແຈ້ງໂດຍລູກຄ້າໃຫ້ທະນາຄານໃນຮູບແບບທີ່ທະນາຄານສາມາດຮັບໄດ້.

# ແຜນນິຍາມຄຳສັບ

ລະຫັດຜູ້ຊົມໃຊ້ ໝາຍເຖິງເລກກຳນົດ ແລະ ຫຼື ເຄື່ອງມືຮັກສາຄວາມປອດໄພ ຫຼື ເປັນຂັ້ນຕອນທີ່ປອດໄພທີ່ມີສັນຍາທີ່ພົວພັນກັບການເຂົ້າເຖິງ ແລະ ຫຼື ນຳໃຊ້ ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ) ທີ່ອາດຈະລວມທັງໃບຢັ້ງຢືນແບບດິຈິຕອນ, ເອກະສານກຳນົດຄວາມສະເພາະດ້ານ, ຊື່ຜູ້ນຳໃຊ້ ແລະ ຫຼື ລະຫັດຜ່ານ, ລາຍເຊັນເອເລັກໂຕຣນິກ ຫຼື ຂໍ້ມູນຂ່າວສານຄວາມລັບອື່ນໆ ຫຼື ຂັ້ນຕອນອື່ນໆ ທີ່ທະນາຄານແລະລູກຄ້າຕົກລົງກັນເປັນແຕ່ລະໄລຍະ, ທີ່ກຳນົດຜູ້ນຳໃຊ້ ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ) ວ່າແມ່ນຜູ້ນຳໃຊ້ທີ່ໄດ້ຮັບອະນຸຍາດ. ລະຫັດຜູ້ນຳໃຊ້ທີ່ຖືກຕ້ອງ ໝາຍເຖິງລະຫັດຜູ້ນຳໃຊ້ທີ່ໄດ້ອອກໃຫ້ລູກຄ້າ (ຫຼືເລືອກເອົາໂດຍລູກຄ້າ ເພື່ອນຳໃຊ້ກັບ ANZ File Active (ຈາກເຈົ້າຂອງໜຶ່ງໄປຫາເຈົ້າຂອງອື່ນ)ແລະ ທີ່ບໍ່ໄດ້ແຈ້ງໃຫ້ທະນາຄານຕາມທີ່ໄດ້ສ້າງຂຶ້ນ.

ຄຳແນະນຳຜູ້ນຳໃຊ້ ໝາຍເຖິງ ຖ້າມີ ຄຳແນະນຳລູກຄ້າ, ຄູ່ມື ຫຼື ເອກະສານທີ່ຄ້າຍຄືສ້າງຂຶ້ນໂດຍທະນາຄານເພື່ອເປັນບ່ອນອີງສຳລັບລູກຄ້າໃນແຕ່ລະໄລຍະທີ່ພົວພັນກັບການບໍລິການຂໍ້ຄວາມ SWIFT ແລະ ອາດຈະຖືກປັບປຸງ ດັດແປງຈາກທະນາຄານ ຫຼື ຕົວແທນຂອງທະນາຄານເປັນແຕ່ລະໄລຍະ.

ເລກບັນຊີທາງເອເລັກໂຕຣນິກ ໝາຍເຖິງເລກບັນຊີໃດໜຶ່ງທີ່ກຳນົດສຳລັບຜູ້ຊຳລະຂອງລູກຄ້າ.

ສາງຫຼັງຄາໂຄ້ງ ໝາຍເຖິງສະຖານທີ່ຫຼັງຄາໂຄ້ງສູນກາງພ້ອມກັບການກຳນົດຄຸນລັກສະນະຕາມທີ່ໄດ້ຕົກລົງກັບລູກຄ້າເປັນແຕ່ລະໄລຍະ.

ການຖອນ ໝາຍເຖິງການຖອນ ຫຼື ການໂອນເງິນຈາກບັນຊີໃດໜຶ່ງ.